**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2482 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 09 ທັນວາ 2024

# ຂໍ້ຕົກລົງ
# ວ່າດ້ວຍຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ , ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 1125/ກຊປ, ລົງວັນທີ 14 ພະຈິກ 2024.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບຄຸ້ມຄອງວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນ່ໃສ່ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດໃຫ້ແກ່ການຈົດທະບຽນຊັບສິນທາງປັນຍາ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ແມ່ນຜູ້ຕາງໜ້າໃຫ້ບໍລິການດຳເນີນການຍື່ນຄຳຮ້ອງ, ຄຳສະເໜີ ແລະ ດຳເນີນການອື່ນ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ ໃຫ້ແກ່ເຈົ້າຂອງຊັບສິນທາງປັນຍາ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນິຕິບຸກຄົນທີ່ດຳເນີນທຸລະກິດທາງດ້ານກົດໝາຍ** ໝາຍເຖິງ ບໍລິສັດທີ່ປຶກສາກົດໝາຍ ທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວວິສາຫະກິດກົດໝາຍ ທີ່ອອກໃຫ້ໂດຍກະຊວງຍຸຕິທຳ;

2. **ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ** ໝາຍເຖິງ ເອກະສານທີ່ໃຊ້ຢັ້ງຢືນການດຳເນີນກິດຈະການເປັນບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ອອກໃຫ້ໂດຍກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດ ເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ

**ມາດຕາ 5 ເງື່ອນໄຂການຂໍອະນຸຍາດເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ຜູ້ທີ່ມີຈຸດປະສົງ ຂໍອະນຸຍາດເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບອະນຸຍາດດຳເນີນທຸລະກິດທາງດ້ານກົດໝາຍ ຫຼື ດຳເນີນທຸລະກິດທີ່ປຶກສາທົ່ວໄປ;
2. ຕ້ອງມີພະນັກງານ ຢ່າງໜ້ອຍ ສອງ ຄົນ ຂຶ້ນໄປ ທີ່ຜ່ານການຝຶກອົບຮົມ ກ່ຽວກັບວຽກງານຊັບສິນທາງປັນຍາ ຈາກກົມຊັບສິນທາງປັນຍາ;
3. ໃນກໍລະນີ ມີພະນັກງານ ສອງ ຄົນ ຂຶ້ນໄປ ທີ່ມີປະສົບການໃນການເຮັດວຽກໃນຂົງເຂດວຽກງານຊັບສິນທາງປັນຍາ ຢ່າງໜ້ອຍ ສອງ ປີ, ບໍ່ຈຳເປັນຕ້ອງຜ່ານການຝຶກອົບຮົມ ກ່ຽວກັບວຽກງານຊັບສິນທາງປັນຍາ.

**ມາດຕາ 6 ການຂໍອະນຸຍາດເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ການຂໍອະນຸຍາດເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ຍື່ນຄຳຮ້ອງຕໍ່ກົມຊັບສິນທາງປັນຍາ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດທາງດ້ານກົດໝາຍ ຫຼື ໃບອະນຸຍາດດຳເນີນທຸລະກິດທີ່ປຶກສາທົ່ວໄປ;
4. ສຳເນົາ ໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບວຽກງານຊັບສິນທາງປັນຍາ ຈາກກົມຊັບສິນທາງປັນຍາ ຫຼື ໃບຢັ້ງຢືນປະສົບການໃນການເຮັດວຽກໃນຂົງເຂດວຽກງານຊັບສິນທາງປັນຍາ.

**ມາດຕາ 7 ການພິຈາລະນາອອກໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງພິຈາລະນາອອກໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ພາຍໃນ ຫ້າ ວັນລັດຖະການນັບຕັ້ງແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ໃນກໍລະນີ ເອກະສານ ບໍ່ຖືກຕ້ອງ ແລະ ຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ສາມ ວັນນັບແຕ່ວັນໄດ້ຮັບເອກະສານ ເພື່ອປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ, ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ສິບ ວັນລັດຖະການ.

**ມາດຕາ 8 ອາຍຸ, ການຕໍ່ອາຍຸ ຫຼື ປ່ຽນແປງຂໍ້ມູນ**

ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ມີອາຍຸ ສາມ ປີ ແລະ ສາມາດຕໍ່ໄດ້ ແຕ່ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸ ພາຍໃນ ຫົກ ສິບວັນ ກ່ອນໃບຢັ້ງຢືນດັ່ງກ່າວ ຈະໝົດອາຍຸ.

ການຕໍ່ອາຍຸ ຫຼື ການປ່ຽນແປງຂໍ້ມູນໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ຍື່ນຄຳຮ້ອງຕໍ່ກົມຊັບສິນທາງປັນຍາ ໂດຍປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍຕໍ່ອາຍຸ ຫຼື ປ່ຽນແປງຂໍ້ມູນ ຕາມແບບພິມຂອງກົມຊັບສິນທາງປັນຍາ;

2. ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ສະບັບຕົ້ນ;

3. ສໍາເນົາໃບທະບຽນວິສາຫະກິດ;

5. ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດທາງດ້ານກົດໝາຍ ຫຼື ໃບອະນຸຍາດດໍາເນີນທຸລະກິດທີ່ປຶກສາທົ່ວໄປ;

4. ສໍາເນົາ ໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບວຽກງານຊັບສິນທາງປັນຍາ ຫຼື ສໍາເນົາ ໃບຢັ້ງຢືນປະສົບການໃນການເຮັດວຽກໃນຂົງເຂດວຽກງານຊັບສິນທາງປັນຍາ;

**ມາດຕາ 9 ສິດ ແລະ ພັນທະຂອງຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

1. ໃຫ້ຄໍາປຶກສາ, ໃຫ້ບໍລິການຍື່ນຄໍາຮ້ອງຂໍຈົດທະບຽນ, ຄໍາສະເໜີ ແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ຫຼື ດໍາເນີນການອື່ນ ນໍາກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນນາມ ເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ເຈົ້າຂອງສິດຊັບສິນທາງປັນຍາ;

2. ດໍາເນີນການ ຍື່ນເອກະສານໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມເງື່ອນໄຂ ແລະ ເວລາທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

3. ຮັບປະກັນການບໍລິການໃຫ້ມີ ຄຸນະພາບ, ໂປ່ງໃສ, ຍຸຕິທໍາ, ຈັນຍາບັນ ແລະ ຄວາມຮັບຜິດຊອບຕໍ່ໜ້າກົດໝາຍ;

4. ເກັບຮັກສາຂໍ້ມູນ ແລະ ເອກະສານຕ່າງໆ ຂອງເຈົ້າຂອງສິດຊັບສິນທາງປັນຍາ;

5. ເປັນໃຈກາງປະສານງານ ລະຫວ່າງ ກົມຊັບສິນທາງປັນຍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ເຈົ້າຂອງສິດຊັບສິນທາງປັນຍາ;

6. ຮັກສາສິດ ແລະ ຜົນປະໂຫຍດຂອງເຈົ້າຂອງສິດຊັບສິນທາງປັນຍາ;

7. ຍື່ນບົດລາຍງານ ສະຫຼຸບການໃຫ້ບໍລິການຂອງຕົນ ໃຫ້ກົມຊັບສິນທາງປັນຍາ ບໍ່ເກີນວັນທີ 31 ມີນາ ຂອງທຸກປີ;

8. ຈັດຕັ້ງປະຕິບັດຕາມ ແຈ້ງການຂອງກົມຊັບສິນທາງປັນຍາ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 10 ການໂຈະ ຫຼື ຍົກເລີກ ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ການໂຈະ ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຕາມແຕ່ກໍລະນີ ດັ່ງນີ້:

1. ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ສະເໜີໂຈະດ້ວຍຄວາມສະໝັກໃຈ;

2. ໂຈະພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຊຶ່ງຜູ້ດໍາເນີນກິດຈະການຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນກໍານົດເວລາ ສາມ ເດືອນ.

ການຍົກເລີກ ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຕາມແຕ່ກໍລະນີ ດັ່ງນີ້:

1. ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ສະເໜີຍົກເລີກດ້ວຍຄວາມສະໝັກໃຈ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນກໍານົດເວລາ ສາມ ເດືອນ ພາຍຫຼັງທີ່ຖືກສັ່ງໂຈະ;
3. ຍັງສືບຕໍ່ເຄື່ອນໄຫວດໍາເນີນກິດຈະການ ໃນເວລາທີ່ຖືກສັ່ງໂຈະ;
4. ມີຄໍາຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດໍາເນີນກິດຈະການ.

## ໝວດທີ 3
## ຂໍ້ຫ້າມ

### ມາດຕາ 11 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງ ການເຄື່ອນໄຫວວຽກງານຂອງພະນັກງານ ໃນການຈັດຕັ້ງປະຕິບັດວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
3. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມແປງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 12 ຂໍ້ຫ້າມ ສຳລັບບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ

ຫ້າມຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ມີພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການທີ່ບໍ່ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ບໍ່ໄດ້ຮັບອະນຸຍາດ ຈາກກົມຊັບສິນທາງປັນຍາ;
2. ອະນຸຍາດ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
3. ນຳໃຊ້ໃບອະນຸຍາດດຳເນີນກິດຈະການເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາທີ່ໝົດອາຍຸ;
4. ເຈດຕະນາ ປອມແປງ ຫຼື ສະໜອງ ເອກະສານ, ຂໍ້ມູນ, ຫຼັກຖານ, ຄຳຊີ້ແຈງ, ຄຳໂຕ້ແຍ້ງ ທີ່ບໍ່ຖືກຕ້ອງກັບສິ່ງທີ່ຜູ້ໃຊ້ບໍລິການສະໜອງໃຫ້;
5. ເປັນຜູ້ຕາງໜ້າໃຫ້ແກ່ຄູ່ກໍລະນີ ທີ່ມີຂໍ້ຂັດແຍ່ງກັບເຈົ້າຂອງສິດຊັບສິນທາງປັນຍາທີ່ຕົນເອງໃຫ້ບໍລິການຢູ່;
6. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍ ຫຼື ໃຊ້ອຳນາດທາງການຕະຫຼາດທີ່ບໍ່ເປັນທຳຕໍ່ຜູ້ປະກອບການອື່ນ;
7. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
8. ວ່າຈ້າງພະນັກງານຄຸ້ມຄອງທີ່ເຮັດວຽກໃນຂົງເຂດຊັບສິນທາງປັນຍາ ຢູ່ ສປປ ລາວ ເປັນພະນັກງານຂອງບໍລິສັດບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
9. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 13 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;
3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ລະເມີດກົດໝາຍ ແລະ ລະບຽບການ;
4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດຖະການ ຫຼື ທຳລາຍເອກະສານ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ

**ມາດຕາ 14 ການຄຸ້ມຄອງວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດຄຸ້ມຄອງ, ວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;
3. ພິຈາລະນາ ອອກ, ຕໍ່ອາຍຸ, ປ່ຽນແປງ, ຍົກເລີກ ແລະ ໂຈະ ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ກ່າວເຕືອນ, ສຶກສາອົບຮົມ ຕໍ່ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການ ອື່ນທີ່ກ່ຽວຂ້ອງ;
6. ປະຕິບັດສິດ ແລະ ນຳໃຊ້ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ພຶດຕິກຳການລະເມີດ ແລະ ອັດຕາການປັບໄໝ ຕໍ່ຜູ້ລະເມີດລະບຽບການເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ

**ມາດຕາ 16 ພຶດຕິກຳການລະເມີດລະບຽບການຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ**

ພຶດຕິກຳ ທີ່ເປັນການລະເມີດລະບຽບການຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ມີດັ່ງນີ້:

1. ເຄື່ອນໄຫວເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ແກ່ເຈົ້າຂອງສິດ ທີ່ເປັນຄົນຕ່າງປະເທດ ໂດຍບໍ່ໄດ້ຮັບຢັ້ງຢືນ ຈາກກົມຊັບສິນທາງປັນຍາ;
2. ອະນຸຍາດໃຫ້ຜູ້ອື່ນ ນຳໃຊ້, ເຊົ່າ ຫຼື ໂອນໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;
4. ນຳໃຊ້ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ໝົດອາຍຸ.

**ມາດຕາ 17 ມາດຕະການປັບໃໝ**

ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ມີພຶດຕິກຳລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ເຄື່ອນໄຫວເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ແກ່ເຈົ້າຂອງສິດ ທີ່ເປັນຄົນຕ່າງປະເທດ ໂດຍບໍ່ໄດ້ຮັບຢັ້ງຢືນ ຈາກກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະຖືກປັບໃໝ ສາມສິບລ້ານ (30,000,000) ກີບຕໍ່ຄັ້ງ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

2. ອະນຸຍາດໃຫ້ຜູ້ອື່ນ ນຳໃຊ້, ເຊົ່າ ຫຼື ໂອນໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຈະຖືກປັບໃໝ ຫ້າສິບລ້ານກີບ (50,000,000) ກີບຕໍ່ຄັ້ງ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

3. ນຳໃຊ້ໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງ ທີ່ໝົດອາຍຸ ຈະຖືກປັບໃໝ ໜຶ່ງລ້ານແປດແສນກີບ (1,800,000) ກີບຕໍ່ຄັ້ງ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

4. ເຈດຕະນາປອມແປງ ຫຼື ສະໜອງເອກະສານ, ຂໍ້ມູນ, ຫຼັກຖານ, ຄຳຊີ້ແຈງ, ຄຳໂຕ້ແຍ້ງ ທີ່ບໍ່ຖືກຕ້ອງ, ການໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາອື່ນ ຫຼື ກົມຊັບສິນທາງປັນຍາ ຈະຖືກປັບໃໝ ຕາມທີ່ລະບຸໄວ້ໃນມາດຕາ 205, 206 ແລະ 374 ຂອງປະມວນກົດໝາຍອາຍາ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຕາມມູນຄ່າຄວາມເສຍຫາຍຕົວຈິງຂອງເຈົ້າຂອງສິດຊັບສິນທາງປັນຍາ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 18 ການປັບໃໝເພີ່ມ**

ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຫາກມີພຶດຕິກຳທີ່ເປັນການລະເມີດ ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ໃຫ້ປັບໃໝເພີ່ມ ດັ່ງນີ້:

1. ລະເມີດຄັ້ງທີສອງ ຈະຖືກປັບໃໝ ສອງ ເທົ່າ;

2. ລະເມີດຄັ້ງທີສາມ ຈະຖືກປັບໃໝ ຫ້າ ເທົ່າ ພ້ອມທັງຍົກເລີກໃບຢັ້ງຢືນເປັນຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

## ໝວດທີ 6
## ການຊຳລະ, ການຄຸ້ມຄອງ ແລະ ນຳໃຊ້ ເງິນປັບໃໝ

**ມາດຕາ 19 ການຊຳລະເງິນປັບໃໝ**

ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະຜ່ານບັນຊີຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 20 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 21 ເປົ້າໝາຍການນຳໃຊ້ເງິນຈາກການປັບໄໝ**

ເງິນທີ່ໄດ້ຈາກການປັບໄໝ ຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ທີ່ຈົດເປັນລາຍຮັບ-ລາຍຈ່າຍວິຊາການ ນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;
2. ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການກ່ຽວກັບການຄຸ້ມຄອງວຽກງານຊັບສິນທາງປັນຍາ;
3. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດວຽກງານບໍລິການຈົດທະບຽນຊັບສິນທາງປັນຍາ ໃຫ້ແກ່ພະນັກງານກົມຊັບສິນທາງປັນຍາ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງ ລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ